ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 210/ຫກ

ນະຄອນຫຼວງວຽງຈັນ, ວັນທີ 27 ມິຖຸນາ 2022

# ແຈ້ງຂ່າວ (ເພີ່ມເຕີມ)
# ກ່ຽວກັບການຈຳໜ່າຍພັນທະບັດ ທະນາຄານແຫ່ງ ສປປ ລາວ ສະກຸນເງິນກີບ ງວດທີ 1 ຈຳນວນ 5.000 ຕື້ກີບ

**ເຖິງ: ພໍ່ແມ່ປະຊາຊົນ, ພໍ່ຄ້າຊາວຂາຍ, ພະນັກງານ, ທະຫານ ແລະ ຕຳຫຼວດ ໃນຂອບເຂດທົ່ວປະເທດ ທີ່ນັບຖື ແລະ ຮັກແພງ,**

- ອີງຕາມ ແຈ້ງການຂອງທະນາຄານແຫ່ງ ສປປ ລາວ ເລກທີ 200/ຫກ, ລົງວັນທີ 13 ມິຖຸນາ 2022.

ຫ້ອງການ ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ພາຍຫຼັງທີ່ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ມີການອອກຈຳໜ່າຍພັນທະບັດ ທຫລ ງວດທີ 1 ວົງເງິນຈຳໜ່າຍ 5.000 ຕື້ກີບ ສູ່ມວນຊົນ ຄັ້ງວັນທີ 15 ມິຖຸນາ 2022 ນັ້ນເຫັນວ່າ ພໍ່ແມ່ປະຊາຊົນໄດ້ໃຫ້ຄວາມສົນໃຈຊື້ພັນທະບັດດັ່ງກ່າວຜ່ານທະນາຄານທຸລະກິດທີ່ເປັນຕົວແທນຈຳໜ່າຍຢ່າງຟົດຟື້ນ ສະແດງອອກຕົວເລກການຈຳໜ່າຍພັນທະບັດເປັນເວລາ 8 ວັນລັດຖະການ (ນັບແຕ່ວັນທີ 15-24 ມິຖຸນາ 2022) ສາມາດປະຕິບັດໄດ້ບັນລຸປະມານ 50% ຂອງຍອດຈຳໜ່າຍທັງໝົດ ໂດຍປະກອບມີບຸກຄົນ ແລະ ນິຕິບຸກຄົນໃນຂອບເຂດທົ່ວປະເທດໄດ້ຊື້ພັນທະບັດດັ່ງກ່າວຫຼາຍກວ່າ 10.517 ລາຍການ.

ພັນທະບັດ ທຫລ ສະກຸນເງິນກີບ ແມ່ນໜຶ່ງໃນປະເພດຫລັກຊັບທີ່ມີຄວາມໝັ້ນຄົງ ແລະ ປອດໄພ ພ້ອມທັງໃຫ້ຜົນຕອບແທນທີ່ດີທີ່ສຸດ ເປັນເຄື່ອງມືນະໂຍບາຍເງິນຕາຂອງທະນາຄານກາງທີ່ນຳໃຊ້ເພື່ອແນໃສ່ຄຸ້ມຄອງປະລິມານເງິນໃນຂອດຈໍລະຈອນໃຫ້ດຸນດ່ຽງກັບລະບົບເສດຖະກິດ ປະກອບສ່ວນເຂົ້າໃນການຮັກສາສະຖຽນລະພາບທາງດ້ານເງິນຕາແຫ່ງຊາດ. ພາຍຫຼັງທີ່ ທຫລ ໄດ້ອອກຈຳໜ່າຍພັນທະບັດ ງວດທີ 1 ນັບແຕ່ວັນທີ 15 ມິຖຸນາ 2022 ເປັນຕົ້ນມາ ຍ້ອນພໍ່ແມ່ປະຊາຊົນປະກອບສ່ວນຊື້ພັນທະບັດດັ່ງກ່າວເປັນຈຳນວນຫຼວງຫຼາຍ ໄດ້ເຮັດໃຫ້ສະພາບການເງິນ-ເງິນຕາຂອງປະເທດ ໂດຍສະເພາະສະພາບອັດຕາແລກປ່ຽນພາຍໃນປະເທດມີທ່າອ່ຽງດີຂຶ້ນ.



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 **BNL.VTE.LS**
ໂທລະສານ: (856)-21-213108 ໂທລະສັບ: 213109-213110 **Email: BOL@bol.gov.la; www.bol.gov.la**

ສະນັ້ນ, ຫ້ອງການ ທຫລ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຊາບເພີ່ມເຕີມວ່າ ທະນາຄານແຫ່ງ ສປປ ລາວ ຍັງສືບຕໍ່ຈຳໜ່າຍພັນທະບັດບ້ອງດັ່ງກ່າວຜ່ານ 8 ທະນາຄານຕົວແທນ ໂດຍປະກອບມີ: ❶ ທະນາຄານພັດທະນາລາວ, ❷ ທະນາຄານສົ່ງເສີມກະສິກຳ, ❸ ທະນາຄານຮ່ວມພັດທະນາ, ❹ ທະນາຄານພົງສະຫວັນ, ❺ ທະນາຄານເອສທີ, ❻ ທະນາຄານ BIC, ❼ ທະນາຄານຮ່ວມທຸລະກິດລາວ-ຫວຽດ ແລະ ❽ ທະນາຄານອຸດສາຫະກຳ ແລະ ການຄ້າຈີນ (ICBC). ສຳລັບ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ເນື່ອງຈາກວົງເງິນຈຳໜ່າຍພັນທະບັດທີ່ ທຫລ ມອບໃຫ້ແມ່ນໄດ້ບັນລຸຍອດຈຳໜ່າຍຮຽບຮ້ອຍແລ້ວ, ປັດຈຸບັນ ທຄຕລ ກຳລັງສະຫຼຸບ ແລະ ໄລ່ລຽງຍອດຈຳໜ່າຍຄືນໃຫ້ ທຫລ, ຫຼັງຈາກນັ້ນ ທຫລ ຈະຈັດສັນຍອດຈຳໜ່າຍພັນທະບັດ (ໃໝ່) ໃຫ້ເພີ່ມເຕີມໃນໄວໆນີ້ ຊຶ່ງໃນໄລຍະນີ້ທ່ານສາມາດຊື້ພັນທະບັດ ທຫລ ຜ່ານ 8 ທະນາຄານຕົວແທນໄດ້ຕາມປົກກະຕິ.

ທະນາຄານແຫ່ງ ສປປ ລາວ ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນເປັນຢ່າງສູງມາຍັງພໍ່ແມ່ປະຊາຊົນ, ພໍ່ຄ້າຊາວຂາຍ, ພະນັກງານ, ທະຫານ ແລະ ຕຳຫຼວດ ໃນຂອບເຂດທົ່ວປະເທດ ທີ່ໃຫ້ການສະໜັບສະໜູນຊື້ພັນທະບັດ ທຫລ ເຊິ່ງເປັນການປະກອບສ່ວນຢ່າງສຳຄັນເຂົ້າໃນການຮັກສາສະຖຽນລະພາບທາງດ້ານການເງິນ-ເງິນຕາຂອງປະເທດເຮົາໃຫ້ດີຂຶ້ນເທື່ອລະກ້າວ. ທະນາຄານແຫ່ງ ສປປ ລາວ ຂໍຢືນຢັນ ແລະ ໃຫ້ຄວາມເຊື່ອໝັ້ນແກ່ພໍ່ແມ່ປະຊາຊົນວ່າ ເມື່ອຄົບກຳນົດອາຍຸພັນທະບັດ ທ່ານຈະໄດ້ຮັບການຊຳລະຕົ້ນທຶນ ແລະ ດອກເບ້ຍຄືນຕາມກຳນົດເວລາທີ່ໄດ້ລະບຸໃນໃບຢັ້ງຢືນການຖືຄອງຢ່າງແນ່ນອນ. ຂໍໃຫ້ທຸກທ່ານຮ່ວມແຮງຮ່ວມໃຈກັນສືບຕໍ່ໃຫ້ການສະໜັບສະໜູນຊື້ພັນທະບັດ ທຫລ ຈົນກວ່າຈະສຳເລັດໃຫ້ບັນລຸຕາມລະດັບຄາດໝາຍທີ່ວາງໄວ້.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານເພື່ອຊາບ.

**ຫົວໜ້າຫ້ອງການ**

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

**ເພັດສະກາພອນ ແກ້ວວົງວິຈິດ**